# ແຈ້ງການໃບຢັ້ງຢືນຄ່າອາຫານໝົດກຳນົດ

*ຖ້າຫາກທ່ານມີຂໍ້ສົງໃສ ຫຼື ຕ້ອງການຂໍ້ມູນເພີ່ມເຕີມ,*
*ກະລຸນາຕິດຕໍ່ເຈົ້າໜ້າທີ່ຂອງທ່ານ.*

- 
- 

- ຊື່ກໍລະນີ :
  ເລກທີກໍລະນີ :
  ເມືອງ :
  ເຈົ້າໜ້າທີ່ :
  ໂທລະສັບ :
- ວັນທີແຈ້ງການ:

---

1. ໃບຢັ້ງຢືນຄ່າອາຫານໃນງວດປະຈຸບັນຂອງທ່ານຈະສິ້ນສຸດໃນວັນທີ ________________________. ຖ້າຫາກທ່ານຢາກສືບຕໍ່ຮັບສະຫວັດດີການຄ່າອາຫານຟູດສະແຕມ ທ່ານຕ້ອງເຮັດໃບສະໝັກໃໝ່ ແລະຈະຖືກຕັດສິນຄວາມເໝາະສົມກ່ອນງວດຢັ້ງຢືນປະຈຸບັນຂອງທ່ານຈະສິ້ນສຸດລົງ.

2. ທ່ານຈະໄດ້ຮັບຈົດໝາຍຕ່າງຫາກທີ່ບອກວັນເວລາຂອງການນັດໝາຍ. *ໃຫ້ທ່ານໂທໄປຫາເຈົ້າໜ້າທີ່ຂອງທ່ານທັນທີ ຖ້າຫາກທ່ານບໍ່ໄດ້ຮັບຈົດໝາຍນັດໝາຍພາຍໃນ 10 ມື້ ຫຼັງຈາກໄດ້ຮັບໃບແຈ້ງນີ້.*

3. ຖ້າຫາກວ່າທ່ານຍື່ນໃບລາຍງານປະຈຳໄຕມາດ, ທ່ານຕ້ອງຍື່ນ ໃບລາຍງານປະຈຳໄຕມາດ (QR 7) ທີ່ເຮັດແລ້ວ ບໍ່ຊ້າກວ່າວັນທີ 11 ຂອງເດືອນທີ່ກຳນົດສົ່ງເພື່ອຫຼີກເວັ້ນຄວາມລ່າຊ້າໃນການໄດ້ຮັບຜົນປະໂຫຍດ.

| |
|---|
| ຖ້າຫາກວ່າທ່ານ ຫຼື ຄົນຕາງໜ້າຂອງທ່ານບໍ່ສາມາດມາສະໝັກໃໝ່ດ້ວຍໂຕເອງ, ໃຫ້ໂທໄປຫາເທດສະບານທີ່ ________________.<br>ພວກເຮົາຈະຈັດການ ໃຫ້ເຈົ້າໜ້າທີ່ສຳພາດທ່ານ ຫຼື ຄົນຕາງໜ້າຂອງທ່ານທາງໂທລະສັບ. |

<u>ກົດລະບຽບສຳຄັນ</u>

- ຖ້າຫາກວ່າທ່ານສະໝັກໃໝ່ຫຼັງວັນທີກຳນົດໄວ້ໃນໝາຍເລກ 1 ຂ້າງເທິງ, ທ່ານອາດຈະຕ້ອງລໍຖ້າເຖິງ 30 ວັນກ່ອນທີ່ຈະມີການດຳເນີນການຂັ້ນສຸດທ້າຍກັບໃບສະໝັກຂອງທ່ານ. ນອກຈາກນີ້ແລ້ວ, ທ່ານອາດຈະໄດ້ຮັບຜົນປະໂຫຍດບາງສ່ວນເທົ່ານັ້ນໃນເດືອນທຳອິດຂອງງວດຢັ້ງຢືນໃໝ່ຂອງທ່ານ. ທ່ານມີສິດທີ່ຈະສະໝັກຂໍບໍລິການເຮັ່ງຮັດ (ES) ຖ້າຫາກມີຄວາມລ່າຊ້າໃນການໄດ້ຮັບຜົນປະໂຫຍດຂອງທ່ານ.

- ຖ້າຫາກວ່າທ່ານມີເຫດຜົນດີໃນການບໍ່ໄດ້ສະໝັກຕາມເວລາທີ່ກຳນົດໄວ້, ທ່ານຄວນອະທິບາຍແກ່ກົມສະຫວັດດີການເທດສະບານ. ຖ້າຫາກວ່າທ່ານມີເຫດຜົນດີໃນການລ່າຊ້າ, ທ່ານອາດຈະໄດ້ຜົນປະໂຫຍດໃດທີ່ເສັຽໄປຄືນໄດ້.

- ທ່ານມີສິດໃນການຂໍໃບສະໝັກຈາກກົມສະຫວັດດີການເທດສະບານໃນເວລາໃດກໍ່ໄດ້ ແລະໃຫ້ກົມສະຫວັດດີການເທດສະບານຮັບໃບສະໝັກຂອງທ່ານ. ຕ້ອງເຊັນໃບສະໝັກ ແລະແຕ້ມຊື່ ທີ່ຢູ່ ແລະລາຍເຊັນ ຫຼື ພະຍານເຫັນການຂີດແຕ້ມໃຫ້ອ່ານໄດ້ຊັດເຈນ.

- ທ່ານຈະມີເວລາ 10 ມື້ທີ່ຈະສົ່ງຫຼັກຖານຢັ້ງຢືນໃດໜຶ່ງທີ່ຈຳເປັນ.

- ການດຳເນີນການນີ້ ແມ່ນກຳນົດໂດຍຄູ່ມືກ່ຽວກັບຟູດສະແຕມ ພາກທີ: 63504.25, 251, ແລະ .6.

**ທ່ານມີສິດຂໍການຮ້ອງຮຽນຕໍ່ລັດ ຖ້າຫາກວ່າທ່ານບໍ່ເຫັນດີກັບເງື່ອນໄຂໃດໜຶ່ງເຫຼົ່ານີ້. ເບິ່ງດ້ານຫຼັງແຈ້ງການນີ້ກ່ຽວກັບວິທີຂໍການຮ້ອງຮຽນ.**